ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ຂໍ້ຫ້າມຕາມດຳລັດວ່າດ້ວຍການປົກປ້ອງຜູ້ຊົມໃຊ້ການບໍລິການທາງດ້ານການເງິນ

ໃນປັດຈຸບັນ ການບໍລິການທາງດ້ານການເງິນຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກ ແມ່ນມີຄວາມສຳຄັນຕໍ່ການດຳລົງຊີວິດປະຈຳວັນຂອງປະຊາຊົນເປັນຈຳນວນຫຼາຍ ເຊັ່ນ: ການຝາກ-ຖອນເງິນ, ການໂອນເງິນ, ການແລກປ່ຽນເງິນຕາ, ການຊຳລະ, ການກູ້ຢືມເງິນ, ການເຊົ່າສິນເຊື່ອ, ການຊວດຈຳ ລວມໄປເຖິງການຊຳລະຜ່ານໂທລະສັບຕ່າງໆ ຊຶ່ງການບໍລິການເຫຼົ່ານັ້ນໄດ້ມີການພັດທະນາຢ່າງໄວວາ ໂດຍມີການນຳໃຊ້ເຕັກໂນໂລຊີທັນສະໄໝ. ພ້ອມນີ້, ການໃຫ້ບໍລິການຍັງມີຄວາມສະຫຼັບສັບຊ້ອນ ຊຶ່ງເຮັດໃຫ້ຜູ້ຊົມໃຊ້ການບໍລິການຂອງສະຖາບັນການເງິນຈຳນວນໜຶ່ງມີຄວາມເຂົ້າໃຈຍາກ ໂດຍສະເພາະລູກຄ້າທີ່ເປັນບຸກຄົນປະກອບການຂະໜາດນ້ອຍ. ອີກດ້ານໜຶ່ງ, ການໃຫ້ຂໍ້ມູນຂອງຜູ້ໃຫ້ບໍລິການກໍຍັງບໍ່ອາດລະອຽດ, ຈະແຈ້ງ ແລະ ບໍ່ພຽງພໍ ຊຶ່ງເຮັດໃຫ້ຜູ້ຊົມໃຊ້ຂາດຄວາມເຂົ້າໃຈທີ່ຖືກຕ້ອງ. ເພື່ອຮັບປະກັນການບໍລິການທາງດ້ານການເງິນຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກ ໃຫ້ມີຄຸນະພາບ, ຖືກຕ້ອງ, ໂປ່ງໃສ ແລະ ເປັນທຳໃນຕໍ່ໜ້າ. ດັ່ງນັ້ນ, ໃນບົດຄວາມສະບັບນີ້ ຜູ້ຂຽນຈະມານຳສະເໜີໃຫ້ທ່ານຜູ້ອ່ານໄດ້ຮັບຊາບ ກ່ຽວກັບຂໍ້ຫ້າມຕາມທີ່ດຳລັດວ່າດ້ວຍການປົກປ້ອງຜູ້ຊົມໃຊ້ການບໍລິການທາງດ້ານການເງິນ ສະບັບເລກທີ 225/ລບ, ລົງວັນທີ 06 ເມສາ 2020 ທີ່ໄດ້ກຳນົດໃຫ້ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ຂໍ້ຫ້າມນີ້ລວມໄປເຖິງພະນັກງານທະນາຄານແຫ່ງ ສປປ ລາວ ກໍຄືພະນັກງານອົງການຄຸ້ມຄອງທະນາຄານ, ສະຖາບັນການເງິນຈຸລະພາກ ແລະ ຜູ້ຊົມໃຊ້ ຈະໄດ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດຢ່າງເຂັ້ມງວດ ດັ່ງລຸ່ມນີ້:

ໂດຍອີງຕາມ ໝວດທີ 5 ຂໍ້ຫ້າມ ຂອງດຳລັດວ່າດ້ວຍການປົກປ້ອງຜູ້ຊົມໃຊ້ການບໍລິການທາງດ້ານການເງິນ ໄດ້ກຳນົດຂໍ້ຫ້າມອອກເປັນ ສາມ ປະເພດຄື: 1. ຂໍ້ຫ້າມສຳລັບຜູ້ໃຫ້ບໍລິການ, 2. ຂໍ້ຫ້າມສຳລັບຜູ້ຊົມໃຊ້ ແລະ 3. ຂໍ້ຫ້າມສຳລັບພະນັກງານຂອງອົງການຄຸ້ມຄອງ ແລະ ກວດກາວຽກງານປົກປ້ອງຜູ້ຊົມໃຊ້ການບໍລິການທາງດ້ານການເງິນ ປະກອບມີ:

1. **ຂໍ້ຫ້າມສຳລັບຜູ້ໃຫ້ບໍລິການ:** ໝາຍວ່າ ຫ້າມດຳເນີນກິດຈະການ ໂດຍບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ ເປັນຕົ້ນແມ່ນ ການເກັບຄ່າທຳນຽມຕ່າງໆໃນການຮັບ, ຄົ້ນຄວ້າ ແລະ ແຈ້ງຄຳສະເໜີຂອງຜູ້ຊົມໃຊ້, ການເປີດເຜີຍຂໍ້ມູນຂອງຜູ້ຊົມໃຊ້ໂດຍບໍ່ໄດ້ຮັບອະນຸຍາດ ເຊັ່ນ: ຍອດເງິນໃນບັນຊີຂອງລູກຄ້າ, ການເຄື່ອນໄຫວບັນຊີຕ່າງໆຂອງລູກຄ້າ. ນອກຈາກນີ້, ການເປີດເຜີຍຂໍ້ມູນ ຫຼື ໂຄສະນາການບໍລິການທາງດ້ານການເງິນ ໂດຍບໍ່ສອດຄ່ອງຕາມຄວາມເປັນຈິງ ເປັນຕົ້ນແມ່ນ ສ້າງຜະລິດຕະພັນທີ່ມີຄວາມເສຍຫາຍຕໍ່ຮີດຄອງປະເພນີອັນດີງາມ ຫຼື ກໍ່ໃຫ້ເກີດອັນຕະລາຍຕໍ່ສັງຄົມ ແລະ ຈຳກັດສິດຂອງຜູ້ຊົມໃຊ້ໃນການຮັບຂໍ້ມູນ, ສະເໜີ, ຮ້ອງຟ້ອງ, ປົກປ້ອງຂໍ້ມູນສ່ວນຕົວ ຫຼື ການຍົກເລີກສັນຍາ ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ພ້ອມນັ້ນການສ້າງຕະຫຼາດແບບຜູກຂາດຝ່າຍດຽວ.
2. **ຂໍ້ຫ້າມສຳລັບຜູ້ຊົມໃຊ້:** ໝາຍວ່າ ຫ້າມໂຄສະນາໃສ່ຮ້າຍປ້າຍສີ ຕໍ່ຜູ້ໃຫ້ບໍລິການ ແລະ ອົງການຄຸ້ມຄອງ ແລະ ກວດກາ ວຽກງານປົກປ້ອງຜູ້ຊົມໃຊ້ການບໍລິການທາງດ້ານການເງິນ, ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ ແລະ ບໍ່ເປັນຈິງໃຫ້ແກ່ຜູ້ໃຫ້ບໍລິການ, ພ້ອມທັງນຳໃຊ້ການບໍລິການທາງດ້ານການເງິນເພື່ອຈຸດປະສົງທີ່ບໍ່ສອດຄ່ອງກັບກົດໝາຍ ແລະ ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ ຫຼື ສ້າງພາບພົດບໍ່ດີຕໍ່ຜູ້ໃຫ້ບໍລິການທາງດ້ານການເງິນ.

**3 ຂໍ້ຫ້າມສຳລັບພະນັກງານອີງການຄຸ້ມຄອງ ແລະ ກວດກາວຽກງານປົກປ້ອງຜູ້ຊົມໃຊ້ການບໍລິການທາງດ້ານການເງິນ**: ໝາຍວ່າ ຫ້າມປະຕິບັດໜ້າທີ່ໂດຍລຳອຽງ ຫຼື ບໍ່ຖືກຕ້ອງຕາມກົດໝາຍ, ຮັບສິນບົນ ຫຼື ຮຽກຮ້ອງເອົາຜົນປະໂຫຍດທີ່ຕິດພັນກັບວຽກງານຄຸ້ມຄອງ ແລະ ກວດກາການປົກປ້ອງຜູ້ຊົມໃຊ້ການບໍລິການທາງດ້ານການເງິນ, ປອມແປງເອກະສານ ຫຼື ໃຊ້ເອກະສານປອມ, ເປີດເຜີຍຄວາມລັບ, ກົດໜ່ວງຖ່ວງດຶງ ຫຼື ທຳລາຍເອກະສານ ກ່ຽວກັບວຽກງານປົກປ້ອງຜູ້ຊົມໃຊ້ການບໍລິການທາງດ້ານການເງິນ ແລະ ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດ ໝາຍ ແລະ ລະບຽບການ.

ທັງໝົດທີ່ໄດ້ນຳສະເໜີໄປນັ້ນແມ່ນຂໍ້ຫ້າມ ທີ່ໄດ້ກຳນົດໃນດຳລັດສະບັບດັ່ງກ່າວ ເພື່ອບັງຄັບໃຊ້ໃນສັງຄົມເວົ້າລວມ, ເວົ້າສະເພາະ ກໍເພື່ອແນໃສ່ບຸກຄົນ, ນິຕິບຸກຄົນ, ທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກ ຕະຫລອດຮອດພະນັກງານທີ່ເຮັດໜ້າທີ່ໃນການຄຸ້ມຄອງທະນາຄານ ແລະ ສະຖາບັນການເງິນຈຸລະພາກ ໃຫ້ຮູ້ວ່າທຸກການກະທຳຕາມຂໍ້ຫ້າມຕ່າງໆ ທີ່ໄດ້ກ່າວມານັ້ນ ລ້ວນແລ້ວແຕ່ເປັນການກະທຳທີ່ລະເມີດຕໍ່ດຳລັດສະບັບນີ້ ເຊິ່ງຜູ້ລະເມີດຈະໄດ້ຮັບຜິດຊອບຕໍ່ຜົນເສຍຫາຍທີ່ອາດເກີດຂຶ້ນ.

ເພາະສະນັ້ນ, ບັນດາທ່ານຜູ້ອ່ານທີ່ນັບຖື ແລະ ຮັກແພງ, ເມື່ອທ່ານໃດໄດ້ອ່ານ ຫຼື ໄດ້ຟັງບົດຄວາມນີ້ແລ້ວ ຖ້າຫາກພົບເຫັນປະກົດການໃດໆທີ່ມີການລະເມີດຕໍ່ຂໍ້ຫ້າມທີ່ກ່າວມານັ້ນ ຈົ່ງພ້ອມກັນກ່າວເຕືອນຕໍ່ບຸກຄົນດັ່ງກ່າວ ເພື່ອໃຫ້ຢຸດຕິ ຫຼື ແຈ້ງໃຫ້ພາກສ່ວນທີ່ກ່ຽວຂ້ອງຮັບຊາບ.

**#ນ. ພອນສະນິດ ພິຈິດ, ກົມນິຕິກຳ ທຫລ**

ຮັກຊາດ, ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ